ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 82 /ສພຂ.ຊຍ

ໄຊຍະບູລີ, ວັນທີ 26 ກໍລະກົດ 2024

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການສະຫຼຸບ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍ ປີ 2024

- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 60 ກອງປະຊຸມສະໄໝສາມັນປະຈຳ 6 ເດືອນຕົ້ນປີ ຂອງສະພາປະຊາຊົນແຂວງ.
- ອີງຕາມ ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍ ປີ 2024.

ຜ່ານການຄົ້ນຄວ້າ, ປະກອບຄຳເຫັນ, ພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕໍ່ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການສະຫຼຸບ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍ ປີ 2024. ໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ **II**.

ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂອງແຂວງ ປະຈຳ 6 ເດືອນຕົ້ນປີ 2024.**

ກອງປະຊຸມສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍ ຕໍ່ອົງການປົກຄອງແຂວງ ທີ່ໄດ້ເອົາໃຈໃສ່ນຳພາ-ຊີ້ນຳ ໃນການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດ ຂອງແຂວງ ຢ່າງຕັ້ງໜ້າ ແລະ ເຫັນດີຕໍ່ການສະຫຼຸບ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂອງແຂວງ ປະຈຳ 6 ເດືອນຕົ້ນປີ 2024 ດັ່ງນີ້:

1. **ດ້ານລາຍຮັບ**: ປະຕິບັດໄດ້ 1.143,09 ຕື້ກີບ, ເທົ່າກັບ 54,63% ຂອງແຜນການປີ, ໃນນີ້:
   - **ລາຍຮັບພູດສູນກາງ**: ປະຕິບັດໄດ້ 636,39 ຕື້ກີບ, ເທົ່າກັບ 46,22% ຂອງແຜນການປີ, ໃນນີ້:
     + ລາຍຮັບພາສີ: ປະຕິບັດໄດ້ 632,36 ຕື້ກີບ, ເທົ່າກັບ 46,16% ຂອງແຜນການປີ.
     + ລາຍຮັບພາສີ (ຄ່າປັບໃໝ): ປະຕິບັດໄດ້ 4,02 ຕື້ກີບ, ເທົ່າກັບ 57,47% ຂອງແຜນການປີ.
   - **ລາຍຮັບພາຍໃນແຂວງ**: ປະຕິບັດໄດ້ 506,70 ຕື້ກີບ, ເທົ່າກັບ 70,84% ຂອງແຜນການປີ, ໃນນີ້:
     + ສ່ວຍສາອາກອນ: ປະຕິບັດໄດ້ 387,91 ຕື້ກີບ, ເທົ່າກັບ 84,39% ຂອງແຜນການປີ.

+ ຄຸ້ມຄອງຊັບສິນຂອງລັດ: ປະຕິບັດໄດ້ 118,79 ຕື້ກີບ, ເທົ່າກັບ 46,40% ຂອງແຜນການປີ.

- **ລາຍຮັບຂອງແຂວງປົກກະຕິ:** ປະຕິບັດໄດ້ 107,94 ຕື້ກີບ, ເທົ່າກັບ 51,51% ຂອງແຜນການປີ, ໃນນີ້:

+ ສ່ວຍສາອາກອນ: ປະຕິບັດໄດ້ 102,59 ຕື້ກີບ, ເທົ່າກັບ 50,05% ຂອງແຜນການປີ.
+ ຊັບສິນ: ປະຕິບັດໄດ້ 5,34 ຕື້ກີບ, ເທົ່າກັບ 117,40% ຂອງແຜນການປີ.

- **ລາຍຮັບສູນກາງມອບໃຫ້ແຂວງ 15 ຫົວໜ່ວຍ:** ປະຕິບັດໄດ້ 398,76 ຕື້ກີບ, ເທົ່າກັບ 78,84% ຂອງແຜນການປີ, ໃນນີ້:

+ ສ່ວຍສາອາກອນ ປະຕິບັດໄດ້ 285,31 ຕື້ກີບ, ເທົ່າກັບ 96,94% ຂອງແຜນການປີ.
+ ຊັບສິນ ປະຕິບັດໄດ້ 112,66 ຕື້ກີບ, ເທົ່າກັບ 64,56% ຂອງແຜນການປີ.

2. **ດ້ານລາຍຈ່າຍ:** ປະຕິບັດໄດ້ 329,82 ຕື້ກີບ, ເທົ່າກັບ 62,75% ຂອງແຜນການປີ.
3. **ດ້ານການດຸ່ນດ່ຽງງົບປະມານ:** ໄດ້ເຄື່ອນຍ້າຍບ້ອງທ້ອງຖິ່ນດຸ່ນດ່ຽງໃຫ້ສູນກາງ 33,87 ຕື້ກີບ, ເທົ່າກັບ 26,14% ຂອງແຜນການປີ.

**ມາດຕາ 2 ຮັບຮອງເອົາແຜນງົບປະມານແຫ່ງລັດ ຂອງແຂວງ ປະຈຳ 6 ເດືອນທ້າຍ ປີ 2024.**

ກອງປະຊຸມຮັບຮອງເອົາ ແຜນວຽກຈຸດສຸມຕາມການສະເໜີຂອງອົງການປົກຄອງແຂວງ, ໃນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ຕາມແຜນການໃນທ້າຍປີ 2024 ກອງປະຊຸມສະເໜີໃຫ້ເອົາໃຈໃສ່ເພີ່ມເຕີມດັ່ງນີ້:

1. **ດ້ານລາຍຮັບ:** ສູ້ຊົນເກັບລາຍຮັບ 6 ເດືອນທ້າຍປີ 2024 ໃຫ້ໄດ້ 1.131,76 ຕື້ກີບ, ເທົ່າກັບ 54,09% ຂອງແຜນການປີ, ຄາດຄະເນໝົດປີ 2.274,86 ຕື້ກີບ, ເທົ່າກັບ 108,73% ຂອງແຜນການປີ, ໃນນີ້:

– **ລາຍຮັບພູດສູນກາງ:** ໃຫ້ໄດ້ 671,75 ຕື້ກີບ, ເທົ່າກັບ 48,78% ຂອງແຜນການປີ, ຄາດຄະເນໝົດປີປະຕິບັດໃຫ້ໄດ້ 1.308,15 ຕື້ກີບ, ເທົ່າກັບ 95,00%, ໃນນີ້:

+ ລາຍຮັບພາສີ: ໃຫ້ໄດ້ 669,13 ຕື້ກີບ, ຄາດຄະເນໝົດປີ 1.301,50 ຕື້ກີບ, ເທົ່າກັບ 95% ຂອງແຜນການປີ.
+ ລາຍຮັບພາສີ (ຄ່າປັບໃໝ): ໃຫ້ໄດ້ 2,62 ຕື້ກີບ, ຄາດຄະເນໝົດປີ 6,65 ຕື້ກີບ, ເທົ່າກັບ 95% ຂອງແຜນການປີ.

– **ລາຍຮັບພາຍໃນແຂວງ:** ໃຫ້ໄດ້ 460,01 ຕື້ກີບ, ເທົ່າກັບ 64,31% ຂອງແຜນການປີ, ຄາດຄະເນໝົດປີປະຕິບັດໃຫ້ໄດ້ 966,71 ຕື້ກີບ, ເທົ່າກັບ 135,15%, ໃນນີ້:

+ ສ່ວຍສາອາກອນ: ສູ້ຊົນໃຫ້ໄດ້ 296,58 ຕື້ກີບ, ເທົ່າກັບ 64,52% ຂອງແຜນການປີ, ຄາດຄະເນໝົດປີໃຫ້ໄດ້ 684,50 ຕື້ກີບ, ເທົ່າກັບ 148,92%.
+ ຄຸ້ມຄອງຊັບສິນຂອງລັດ: ສູ້ຊົນໃຫ້ໄດ້ 162,44 ຕື້ກີບ, ເທົ່າກັບ 64,18% ຂອງແຜນການປີ, ຄາດຄະເນໝົດປີໃຫ້ໄດ້ 278,76 ຕື້ກີບ, ເທົ່າກັບ 110,14%.

- **ລາຍຮັບຂອງແຂວງປົກກະຕິ:** ປະຕິບັດໄດ້ 51,55 ຕື້ກີບ, ເທົ່າກັບ 24,60% ຂອງແຜນການປີ, ຄາດຄະເນໝົດປີ 159,49 ຕື້ກີບ, ເທົ່າກັບ 76,11 %ໃນນີ້:

+ ສ່ວຍສາອາກອນ: ສູ້ຊົນໃຫ້ໄດ້ 49,73 ຕື້ກີບ, ຄາດຄະເນໝົດປີ 152,33 ຕື້ກີບ, ເທົ່າກັບ 74,31% ຂອງແຜນການປີ.
+ ຊັບສິນ: ສູ້ຊົນໃຫ້ໄດ້ 1,18 ຕື້ກີບ, ຄາດຄະເນໝົດປີ 7,16 ຕື້ກີບ, ເທົ່າກັບ 157,32% ຂອງແຜນການປີ.

- **ລາຍຮັບສູນກາງມອບໃຫ້ແຂວງ 15 ຫົວໜ່ວຍ:** ສູ້ຊົນປະຕິບັດໃຫ້ໄດ້ 408,45 ຕື້ກີບ ເທົ່າກັບ 80,76% ຂອງແຜນການປີ, ຄາດຄະເນໝົດປີ 807,21 ຕື້ກີບ, ເທົ່າກັບ 159,61%, ໃນນີ້:

+ ສ່ວຍສາອາກອນ: ສູ້ຊົນໃຫ້ໄດ້ 246,84 ຕື້ກີບ, ຄາດຄະເນໝົດປີ 532,16 ຕື້ກີບ, ເທົ່າກັບ 208,98% ຂອງແຜນການປີ.
+ ຊັບສິນ: ສູ້ຊົນໃຫ້ໄດ້ 161,60 ຕື້ກີບ, ຄາດຄະເນໝົດປີ 275,05 ຕື້ກີບ, ເທົ່າກັບ 109,54% ຂອງແຜນການປີ.

2. **ດ້ານລາຍຈ່າຍ:** ເອົາໃຈໃສ່ຄຸ້ມຄອງລາຍຈ່າຍໃນ 06 ເດືອນທ້າຍປີ ໃຫ້ຢູ່ໃນລະດັບ 373,99 ຕື້ກີບ ເທົ່າກັບ 63,85% ຂອງແຜນການປີ, ຄາດຄະເນໝົດປີໃຫ້ໄດ້ 703,81 ຕື້ກີບ, ເທົ່າກັບ 120,15% ຂອງແຜນການປີ.
3. **ດ້ານການດຸ່ນດ່ຽງງົບປະມານ:** ສູ້ຊົນເຄື່ອນຍ້າຍບ້ວງທ້ອງຖິ່ນດຸ່ນດ່ຽງໃຫ້ສູນກາງ 95,64 ຕື້ກີບ, ເທົ່າກັບ 73,85% ຂອງແຜນການປີ, ຄາດຄະເນໝົດປີ 129,51 ຕື້ກີບ ເທົ່າກັບ 100%.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂອງແຂວງ ປະຈຳ 6 ເດືອນທ້າຍປີ 2024.**

ກອງປະຊຸມ ເຫັນດີເປັນເອກະພາບຮັບຮອງເອົາ 5 ມາດຕະການດ້ານລາຍຮັບ ແລະ 6 ມາດຕະການດ້ານລາຍຈ່າຍ, ບັນດາມາດຕະການໃນແຕ່ລະດ້ານ ຂອງແຜນງົບປະມານແຫ່ງລັດ ຕາມການສະເໜີຂອງອົງການປົກຄອງແຂວງ, ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂອງແຂວງ ປະຈຳ 6 ເດືອນທ້າຍປີ 2024 ບັນລຸຕາມແຜນການທີ່ວາງໄວ້, ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ເອົາໃຈໃສ່ຈັດຕັ້ງປະຕິບັດມາດຕະການເພີ່ມເຕີມ ດັ່ງນີ້:

1. **ດ້ານລາຍຮັບ**

1.1 ກອງປະຊຸມສະເໜີໃຫ້ອົງການປົກຄອງແຂວງ ສູ້ຊົນປະຕິບັດແຜນລາຍຮັບ ແລະ ຄຸ້ມຄອງລາຍຈ່າຍປະຈຳປີ, ພ້ອມທັງສືບຕໍ່ປະຕິບັດ 6 ມາດຕະການດ້ານລາຍຮັບ ແລະ 4 ມາດຕະການດ້ານລາຍຈ່າຍ ທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II.

1.2 ສືບຕໍ່ຊຸກຍູ້ແກ້ໄຂການປະຕິບັດເກັບລາຍຮັບ-ລາຍຈ່າຍ ງົບປະມານທີ່ຕິດພັນຈາກການແກ້ໄຂຜົນການກວດສອບ-ກວດກາ ປີຜ່ານມາ ເປັນຕົ້ນລາຍຮັບທີ່ກວດເຫັນເພີ່ມ, ເກັບກູ້ຄືນໜີ້ຕ້ອງຮັບຈາກອາກອນ ແລະ ຊັບສິນຂອງລັດ ທີ່ແກ່ຍາວເປັນເວລາຫຼາຍປີໃຫ້ມີທ່າອ່ຽງເພີ່ມຂຶ້ນ.

1.3 ຢຸດຕິການຍົກເວັ້ນພາສີ-ອາກອນ ແລະ ດຳເນີນມາດຕະການເດັດຂາດ ໃນການແກ້ໄຂບັນຫາການສໍ້ລາດບັງຫຼວງ ທີ່ສ້າງຄວາມເສຍຫາຍຢ່າງໃຫຍ່ຫຼວງໃຫ້ແກ່ເສດຖະກິດຂອງຊາດ ແລະ ປະກົດການຫຍໍ້ທໍ້ໃນສັງຄົມ.

1.4 ເອົາໃຈໃສ່ປະເມີນຄືນຖານລາຍຮັບຈາກການເຊົ່າສຳປະທານ, ການຂຸດຄົ້ນແຮ່ທາດ, ລວມທັງ ສືບຕໍ່ຕິດຕາມຊຸກຍູ້ ແລະ ຂະຫຍາຍ ການຫັນເປັນທັນສະໄໝ ໃນການເກັບລາຍຮັບດ້ວຍລະບົບເອເລັກໂຕຼນິກໃຫ້ທົ່ວເຖິງ ແລະ ສຳເລັດໂດຍໄວ.

1.5 ເລັ່ງທວງ ແລະ ມີມາດຕະການ ໃນການເກັບກູ້ຄືນໜີ້ຕ້ອງຮັບຈາກ ບັນດາຫົວໜ່ວຍງົບປະມານລັດ ແລະ ຫົວໜ່ວຍທຸລະກິດເອກະຊົນ.

1.6 ສືບຕໍ່ເກັບກູ້ລາຍຮັບຊັບສິນທີ່ຖືກຍຶດ ຈາກຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ຈັດຕັ້ງການປະມູນຂາຍ ເພື່ອນຳເງິນເຂົ້າງົບປະມານແຫ່ງລັດ.

1.7 ເອົາໃຈໃສ່ແກ້ໄຂບັນຫາການຮົ່ວໄຫລ ຂອງການເກັບລາຍຮັບເປັນຕົ້ນ ການປະຕິບັດວຽກງານຂອງເຈົ້າໜ້າທີ່ ໃນຂົງເຂດຈັດເກັບລາຍຮັບ, ການມອບພັນທະພາສີ-ອາກອນຂອງບັນດາຫົວໜ່ວຍທຸລະກິດ ໂດຍມີມາດຕະການລົງໂທດຕໍ່ຜູ້ກະທຳຜິດຢ່າງເດັດຂາດ ແລະ ເຂັ້ມງວດ.

1.8 ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອກວດກາສັງລວມພາຫະນະ ທີ່ຄ້າງຊໍາລະຄ່າທໍານຽມທາງ ລວມທັງຈໍານວນພາຫານະທັງໝົດພາຍໃນແຂວງ ເພື່ອດໍາເນີນການຈັດເກັບຄ່າທໍານຽມທາງໃນປີ 2024 ໃຫ້ໄດ້ຢ່າງຄົບຖ້ວນ.

1.9 ຊຸກຍູ້ຕິດຕາມ ກວດກາ ບັນດາຫົວໜ່ວຍທຸລະກິດໄຟຟ້າ ແລະ ບໍ່ແຮ່ ທີ່ແຂວງຄຸ້ມຄອງ ແລະ ຂອງສູນກາງມອບໂອນໃຫ້ ທີ່ມີການເຄື່ອນໄຫວ ຢູ່ພາຍໃນແຂວງ ໃຫ້ມີການແຈ້ງ-ມອບພັນທະ ເປັນປົກກະຕິ ຖືກຕ້ອງຕາມຂໍ້ມູນຕົວຈິງ ເປັນຕົ້ນ: ໂຄຕ້າການສົ່ງອອກ, ກໍາລັງການຜະລິດ, ຄວາມເຂັ້ມຂຸ້ນຂອງແຮ່ທາດ ແລະ ອື່ນໆ ລວມທັງບັນດາຜູ້ສະໜອງສິນຄ້າ ແລະ ບໍລິການໃຫ້ບໍລິສັດຕ່າງໆ ເພື່ອກວດກາໄລ່ລຽງພັນທະໃຫ້ຖືກຕ້ອງຄົບຖ້ວນ.

1.10 ຕິດຕາມ, ຊຸກຍູ້-ສົ່ງເສີມໃນການເກັບກໍາຖານຂໍ້ມູນຈາກຊັບສິນຂອງລັດທີ່ມີທ່າແຮງບໍ່ມຊ້ອນ-ມີເງື່ອນໄຂຄົ້ນຄ້ວາ, ວິເຄາະ, ວິໄຈ ທີ່ຈະສາມາດສ້າງເປັນຖານລາຍຮັບໃໝ່ ໂດຍສະເພາະກໍ່ຄືຊັບສິນຂອງລັດທີ່ນອນຢູ່ໃນບັນດາຂະແໜງການກ່ຽວຂ້ອງ ທີ່ໄດ້ຄຸ້ມຄອງ ແລະ ມີລາຍຮັບ, ການຫັນປ່ຽນຊັບສິນຂອງລັດເປັນຂອງບຸກຄົນ.

**2. ດ້ານລາຍຈ່າຍ**

2.1 ສືບຕໍ່ເອົາໃຈໃສ່ຄຸ້ມຄອງລາຍຈ່າຍ ຕາມມາດຕະການປະຢັດມັດທະຍັດ ແລະ ຕ້ານການຟຸມເຟືອຍຂອງລັດຖະບານ, ປະຕິບັດແຜນລາຍຈ່າຍບູລິມະສິດປະຈໍາປີຂອງອົງການປົກຄອງແຂວງ ໃຫ້ທັນເວລາ ແລະ ເບີກຈ່າຍຄົບຖ້ວນຕາມແຜນການ;

2.2 ການຈັດສັນງົບປະມານ ໄປຊໍາລະໜີ້ສິນບໍລິຫານ ເປັນຕົ້ນ ຄ່າໄຟຟ້າ, ນໍ້າປະປາ, ໂທລະຄົມມະນາຄົມ.

2.3 ເອົາໃຈໃສ່ຄຸ້ມຄອງບັນດາກອງທຶນຕາມນິຕິກໍາຂອງແຂວງ ໃຫ້ລວມສູນເຂົ້າງົບປະມານ ຕາມມາດຕາ 6 ແລະ ມາດຕາ 8 ຂອງກົດໝາຍວ່າ ດ້ວຍງົບປະມານແຫ່ງລັດ ແລະ ລະບຽບການກ່ຽວຂ້ອງ.

2.4 ປະຕິບັດ ຕາມແຈ້ງການຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 1105/ກງ, ລົງວັນທີ 02 ເມສາ 2024 ໃນການຈັດຕັ້ງປະຕິບັດເງິນອຸດໜູນຄ່າຄອງຊີບເພີ່ມ 150.000 ກີບປີ 2024 ແລະ ການປະຕິບັດນະໂຍບາຍຕໍ່ຖອາສາສະໝັກ, ພະນັກງານບໍານານ ແລະ ທະຫານຊາຍແດນ.

ມາດຕາ 4 ການຈັດຕັ້ງປະຕິບັດ.

1. ມອບໃຫ້ອົງການປົກຄອງແຂວງ ນໍາພາ-ຊີ້ນໍາ ບັນດາພະແນກການ, ອົງການລັດທຽບເທົ່າ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.
2. ມອບໃຫ້ ຄະນະປະຈໍາສະພາປະຊາຊົນແຂວງ, ຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນ ບັນດາຄະນະກໍາມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງ ຢູ່ບັນດາເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

ມາດຕາ 5 ຜົນສັກສິດ

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນີລັນ ຄໍາພັນເພັງ